**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ
ກົມແຜນການ ແລະ ການຮ່ວມມືສາກົນ
ຄະນະຮັບຜິດຊອບໂຄງການ

ເລກທີ 200/ກຜຮ.1

ນະຄອນຫຼວງວຽງຈັນ, ວັນທີ 27/3/2026

## ໜັງສືແຈ້ງເຊີນປະມູນ

### ໂຄງການບັນດາກິດຈະກຳຊຸກຍູ້ການທ່ອງທ່ຽວ

### ສ້ອມແປງ ແລະ ຕໍ່ເຕີມອາຄານຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວເມືອງຫຼາ (ວັດພຣະເຈົ້າສິງຄຳ), ແຂວງອຸດົມໄຊ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການບັນດາກິດຈະກຳຊຸກຍູ້ການທ່ອງທ່ຽວ ສ້ອມແປງ ແລະ ຕໍ່ເຕີມອາຄານຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວເມືອງຫຼາ (ວັດພຣະເຈົ້າສິງຄຳ), ແຂວງອຸດົມໄຊ ສະບັບເລກທີ 174/ວທ, ລົງວັນທີ 20 ມີນາ 2026;
- ອີງຕາມ ແຈ້ງການ ແຈ້ງແຜນການລົງທຶນຂອງລັດປະຈຳສົກປີ 2026 ສະບັບເລກທີ 07/ວທ, ລົງວັນທີ 09 ກຸມພາ 2026 ແລະ ໃບແຈ້ງໂຕເລກງົບປະມານການລົງທຶນຂອງລັດພາກ 67 ສະບັບເລກທີ 93/ຜກຮ.1, ລົງວັນທີ 11 ກຸມພາ 2026.

ຄະນະຮັບຜິດຊອບໂຄງການບັນດາກິດຈະກຳຊຸກຍູ້ການທ່ອງທ່ຽວ ສ້ອມແປງ ແລະ ຕໍ່ເຕີມອາຄານຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວເມືອງຫຼາ (ວັດພຣະເຈົ້າສິງຄຳ), ແຂວງອຸດົມໄຊ ຂໍຖືເປັນກຽດ ແຈ້ງເຊີນມາຍັງບັນດາ ບໍລິສັດ, ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນຮັບເໝົາໂຄງການດັ່ງກ່າວ ເຊິ່ງມີເນື້ອໃນລາຍລະອຽດດັ່ງນີ້:

1. ກະຊວງວັດທະນະທຳ ແລະ ການທ່ອງທ່ຽວໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ(ບ້ວງລົງທຶນປົກກະຕິ)ແຜນປີ 2026 ໂຄງການບັນດາກິດຈະກຳຊຸກຍູ້ການທ່ອງທ່ຽວ ສ້ອມແປງ ແລະ ຕໍ່ເຕີມອາຄານຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວເມືອງຫຼາ (ວັດພຣະເຈົ້າສິງຄຳ), ແຂວງອຸດົມໄຊ. ສຳລັບໄລຍະເວລາຂອງການຈັດຕັ້ງປະຕິບັດ ວຽກທັງໝົດແມ່ນບໍ່ໃຫ້ກາຍ 3 ປີ ນັບຕັ້ງແຕ່ມື້ອອກໃບສັ່ງວຽກໃຫ້ຈັດຕັ້ງປະຕິບັດຈົນເຖິງມື້ມອບ - ຮັບໂຄງການ;
2. ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ຂໍເຊີນບັນດາ ບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນນະວຸດທິເໝາະສົມເຂົ້າຍື່ນຊອງປະມູນການສ້ອມແປງ ແລະ ຕໍ່ເຕີມອາຄານຫ້ອງຂໍ້ມູນຂ່າວສານການທ່ອງທ່ຽວເມືອງຫຼາ (ວັດພຣະເຈົ້າສິງຄຳ), ແຂວງອຸດົມໄຊ;
3. ໃນການປະມູນແມ່ນຈະດຳເນີນການປະມູນຮູບແບບເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;

4. ການປະມູນແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີຄຸນນະວຸທິເໝາະສົມ, ມີໃບທະບຽນວິສາຫະກິດ, ທີ່ຖືກຕ້ອງຕາມກົດໝາຍ (ສຳເນົາດ້ານຫຼັງມາພ້ອມ) ແລະ ມີໃບອະນຸຍາດດຳເນີນທຸລະກິດດ້ານກໍ່ສ້າງ-ສ້ອມແປງ ເຄຫາສະຖານປະຈຳປີ 2026 ແລະ ໃບຢັ້ງຢືນການມອບອາກອນປີ 2025;
5. ທຸກໆ ບໍລິສັດ ຕ້ອງປະກອບບົດບັນທຶກ ການກວດກາບັນຊີແບບຄົບຊຸດ ປະຈຳປີ 2025 ອອກໂດຍກົມສ່ວຍສາອາກອນ (ຍົກເວັ້ນບໍລິສັດເປີດໃໝ່) ແລະ ການເຄື່ອນໄຫວບັນຊີສຳຮອງ ບໍລິສັດ ໄລຍະ 03 ເດືອນ (1,2,3) ຜ່ານມາ ວົງເງິນບໍ່ຫຼຸດ 1,000,000,000 ກີບ ຂຽນເປັນໂຕໜັງສື (ໜຶ່ງຕື້ກີບ) ແລະ ບັນຊີສຳຮອງບໍ່ໃຫ້ກາຍ 01 ອາທິດກ່ອນມື້ເປີດຊອງປະມູນ;
6. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນຊື້ຊອງປະມູນ ໄດ້ນຳຄະນະຮັບຜິດຊອບໂຄງການຢູ່ທີ່ ກົມແຜນການ ແລະ ການຮ່ວມມືສາກົນ(ພະແນກແຜນການ ແລະ ການລົງທຶນ), ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສອບຖາມຂໍ້ມູນໂທ: 020 7888 8649 ນາງ ແສງຄຳ ບຸນນາວົງ; 020 5624 9151 ນາງ ນົງພອນ ຄຳສອນ, ການຂາຍຊອງປະມູນເລີ່ມແຕ່ວັນທີ 27 ມີນາ 2026 ຫາ 30 ເມສາ 2026 (ຕາມໂມງລັດຖະການ)ໃນລາຄາ 1,000,000 ກີບ/ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
7. ທຸກໆ ຊອງປະມູນຕ້ອງໄດ້ປະກອບການຄໍ້າປະກັນການປະມູນດ້ວຍເງິນສົດ, ແຊັກ(ວິຊ້າ) ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານບໍ່ໃຫ້ຫລຸດ 2% (ສ່ອນຮ້ອຍ) ຂອງລາຄາປະມູນ ແລະ ໃສ່ມາພ້ອມຊອງປະມູນ;
8. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງຂອງວັນທີ 30 ເມສາ 2026 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງວັດທະນະທຳ ແລະ ການທ່ອງທ່ຽວ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 14:00 ໂມງຂອງວັນທີ 30 ເມສາ 2026 ທີ່ຫ້ອງປະຊຸມຊັ້ນ 01 ຂອງຕຶກກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງ ບໍລິສັດ ເຂົ້າຮ່ວມ.

ຫົວໜ້າຄະນະຮັບຜິດຊອບໂຄງການ

ວ່າການຫົວໜ້າກົມ

ຄຳພູ ເພັຍສັກຂາ